ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 211 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 18 ສິງຫາ 2023

## ໜັງສືແຈ້ງການ

**ເຖິງ:** ພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານລັດຖະກອນ, ທະຫານ, ຕໍາຫຼວດ, ຕະຫຼອດເຖິງຜູ້ທີ່ອາໄສຢູ່ ສປປ ລາວໃນຂອບເຂດທົ່ວປະເທດ.

**ເລື່ອງ:** ໃຫ້ມີສະຕິລະວັງຕົວຕໍ່ການຮັບຟັງຂ່າວສານທີ່ບໍ່ມີມູນຄວາມຈິງຕາມສື່ອອນລາຍຕ່າງໆ.

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ຄໍາສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023.

ຫ້ອງການທະນາຄານແຫ່ງ ສປປ ລາວ (ທຫລ) ຂໍແຈ້ງມາຍັງທ່ານຊາບວ່າ ໃນປັດຈຸບັນໄດ້ມີຜູ້ບໍ່ຫວັງດີຈໍານວນໜຶ່ງໄດ້ເຄື່ອນໄຫວ ແລະ ປ່ອຍຂ່າວວ່າ: "ຜູ້ໃດຫາກມີບັນຊີເງິນຝາກທີ່ເປັນເງິນຕາຕ່າງປະເທດ ຫຼື ການໂອນເງິນມາຈາກຕ່າງປະເທດ ເພື່ອເຂົ້າບັນຊີຂອງຕົນທີ່ຝາກໄວ້ນໍາທະນາຄານທຸລະກິດ ຢູ່ ສປປ ລາວ ຈະບໍ່ສາມາດຖອນເງິນດັ່ງກ່າວເປັນສະກຸນເງິນຕາຕ່າງປະເທດໄດ້ເລີ່ມແຕ່ເດືອນ ກັນຍາ 2023 ເປັນຕົ້ນໄປນັ້ນ" **ແມ່ນເປັນການເປົ່າຂ່າວທີ່ບໍ່ມີມູນຄວາມຈິງ, ອີງໃສ່ນິຕິກໍາການຄຸ້ມຄອງເງິນຕາຕ່າງປະເທດ ແລະ ລະບຽບການທີ່ກ່ຽວຂ້ອງ** ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ມີບັນຊີເງິນຝາກເປັນເງິນຕາຕ່າງປະເທດທີ່ຝາກໄວ້ນໍາທະນາຄານທຸລະກິດຢູ່ ສປປ ລາວ ແມ່ນສາມາດຮັບດອກເບ້ຍ ແລະ ຖອນເປັນເງິນຕາຕ່າງປະເທດໄດ້ຕາມລະບຽບການ.

ສະນັ້ນ, ຫ້ອງການທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງມາຍັງພໍ່ແມ່ປະຊາຊົນ, ພໍ່ຄ້າຊາວຂາຍ, ພະນັກງານລັດຖະກອນ, ທະຫານ, ຕໍາຫຼວດ, ຕະຫຼອດເຖິງຜູ້ທີ່ອາໄສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ ຈົ່ງມີສະຕິລະວັງຕົວ ແລະ ບໍ່ໃຫ້ຫຼົງເຊື່ອຂໍ້ມູນຂ່າວສານທີ່ບໍ່ມີມູນຄວາມຈິງດັ່ງກ່າວ. ດັ່ງນັ້ນ, ຈຶ່ງຮຽກຮ້ອງໃຫ້ທຸກພາກສ່ວນເອົາໃຈໃສ່ ແລະ ຕິດຕາມຂໍ້ມູນຂ່າວສານທີ່ຖືກຕ້ອງຈາກພາກສ່ວນທີ່ກ່ຽວຂ້ອງເທົ່ານັ້ນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ຕາມເນື້ອໃນຈິດໃຈແຈ້ງການສະບັບນີ້ດ້ວຍ.

**ເຊັນແທນຫົວໜ້າຫ້ອງການ**

**ຮອງຫົວໜ້າຫ້ອງການ**

ສຸກັນ ຈັນທະວົງ

ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 **BNL.VTE.LS**
ໂທລະສານ: (856)-21-213108 ໂທລະສັບ: 213109-213110 **Email: BOL@bol.gov.la; www.bol.gov.la**